ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ)

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

---

# ບົດສະຫລຸບການຈັດຕັ້ງປະຕິບັດໜ້າວຽກຂອງ ທລຍ

## (ປະຈຳເດືອນ ທັນວາ 2014)

**ຄະນະຮັບຜິດຊອບ ທລຍ ສູນກາງ**

*ກະກຽມໂດຍ:* ໜ່ວຍງານຕິດຕາມປະເມີນຜົນ

9 ມັງກອນ 2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ
ຄະນະພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກຂັ້ນສູນກາງ
**ກອງທຶນຫຼຸດຜ່ອນຄວາມທຸກຍາກ**

# <u>ບົດລາຍງານ</u>

## ຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານ ທລຍ ປະຈຳເດືອນ ທັນວາ ແລະ ແຜນປະຈຳເດືອນ ມັງກອນ 2015

### *I. ສະພາບການໂດຍລວມ*

ວຽກງານທີ່ພົ້ນເດັ່ນໃນເດືອນທັນວາ 2014 ທີ່ຜ່ານມາແມ່ນໄດ້ຕີລາຄາຄືນກ່ຽວກັບຜົນຂອງການມາຢ້ຽມຢາມຂອງຜູ້ໃຫ້ທຶນ, ໂດຍລວມແລ້ວຜູ້ໃຫ້ທຶນມີຄວາມເພິ່ງພໍໃຈຫລາຍຕໍ່ການຈັດຕັ້ງປະຕິບັດວຽກງານ ທລຍ ໄລຍະ 2 ພໍສົມຄວນ, ເຊິ່ງຜູ້ໃຫ້ທຶນໄດ້ກ່າວວ່າ ມາຮອດປະຈຸບັນ ທລຍ ເຄື່ອນໄຫວວຽກງານທີ່ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງ ພໍ່ແມ່ປະຊາຊົນຜູ້ທຸກຍາກ ໄດ້ດີພໍສົມຄວນ ໂດຍສະເພາະແມ່ນສາມາດສະໜອງໂຄງການຍ່ອຍໄດ້ທັງໝົດ 988 ໂຄງການ ທີ່ກ່ຽວຂ້ອງກັບຂະແໜງການຕ່າງໆ (ສຶກສາ, ສາທາ, ນ້ຳສະອາດ, ຄົມມະນາຄົມ ແລະ ກະສິກຳ), ມີຫລາຍກວ່າ 900 ບ້ານທຸກຍາກ ໄດ້ຮັບຜົນໂຫຍດໂດຍກົງ ແລະ ກວມເອົາປະຊາກອນຫລາຍກວ່າ 474.660 ຄົນ ໃນນັ້ນເປັນເພດຍິງເຖິງເຄິ່ງໜຶ່ງ ແລະ ເປັນຊົນເຜົ່າສ່ວນນ້ອຍປະມານ 68 % ຂອງ ຈຳນວນຜູ້ທີ່ໄດ້ຮັບຜົນປະໂຫຍດທັງໝົດ (ສ່ວນບ້ານທີ່ໄດ້ຮັບຜົນປະໂຫຍດທາງອ້ອມແມ່ນກຳລັງເກັບກຳຂໍ້ມູນ ແລະ ຈະລາຍງານຄັ້ງຕໍ່ໄປ).

ອັນສຳຄັນກວ່າໝູ່ແມ່ນພໍ່ແມ່ປະຊາຊົນຜູ້ທີ່ໄດ້ຮັບຜົນປະໂຫຍດ ແມ່ນມີຄວາມພໍໃຈຫຼາຍຕໍ່ໂຄງການຍ່ອຍ ຂອງ ທລຍ ເຊິ່ງສູງເຖິງ 80 % ພ້ອມດຽວກັນນີ້, ບັນດາໂຄງການຍ່ອຍທີ່ສຳເລັດການກໍ່ສ້າງ ແລະ ຖືກນຳໃຊ້ມາແລ້ວ ເປັນເວລາ 2 ປີນັ້ນ ແມ່ນຍັງມີສະພາບດີ ແລະ ສາມາດແກ້ໄຂຊີວິດກໍຄືການອຳນວຍຄວາມສະດວກຕໍ່ຊີວິດປະຈຳວັນຂອງ ພໍ່ແມ່ປະຊາຊົນ ໄດ້ໃນລະດັບແນ່ນອນ, ບໍ່ພຽງແຕ່ເທົ່ານັ້ນ ຜູ້ໃຫ້ທຶນກໍມີຄວາມພໍໃຈກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ສະແດງເຈດຈຳນົງເພື່ອສືບຕໍ່ໄລຍະຂອງ ທລຍ ຈົນຮອດປີ 2017.

ສຳລັບວຽກງານເດັ່ນອື່ນໆ ທີ່ໄດ້ຈັດຕັ້ງປະຕິບັດໃນເດືອນຜ່ານມາ ສາມາດສະຫລຸບລາຍລະອຽດດັ່ງລຸ່ມນີ້:

1) ຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດບັນດາໂຄງການຍ່ອຍ ຂອງ ສົກປີ 2013 – 2014 ແລະ ຕິດຕາມແຜນຂອງການຈັດຕັ້ງປະຕິບັດໃນສົກປີ 2014-2015.
2) ຜົນການຈັດຕັ້ງປະຕິບັດວຽກງານດ້ານວິຊາສະເພາະຂອງແຕ່ລະພະແນກ ແລະ ໂດຍສະເພາະຫນ້າວຽກທີ່ພົ້ນເດັ່ນ.

## *II. ການຕິດຕາໜ້າວຽກໂຄງການຍ່ອຍ*

### 2. 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ບັນດາໂຄງການຍ່ອຍຮອບວຽນ 11 ຂອງ (ສົກປີ 2013 – 2014)

### 2.1.1. ດ້ານການກໍ່ສ້າງໂຄງລ່າງພື້ນຖານ

ໃນສົກປີ 2013 - 2014 (ຮອບວຽນ 11) ທລຍ ໄດ້ຈັດຕັ້ງປະຕິບັດວຽກງານຢູ່ 10 ແຂວງ, 42 ເມືອງ, 278 ກຸ່ມບ້ານ ແລະ ກວາມເອົາ 1951 ບ້ານ, ໃນຮອບວຽນດັ່ງກ່າວ ທລຍ ໄດ້ໃຫ້ການສະໜັບສະໜູນຈຳນວນ 333 ໂຄງການ ແລະ ໃຊ້ງົບປະມານທັງໝົດປະມານ 9,698,846 ໂດລາສະຫະລັດ. ຕົກມາຮອດທ້າຍເດືອນ ທັນວາ 2014 ຈຳນວນ 286 ໂຄງການ (85.89 %) ຂອງໂຄງການທັງໝົດໄດ້ຈັດຕັ້ງປະຕິບັດສຳເລັດ 100% ເພີ່ມຂຶ້ນ 9.62 % ຈາກເດືອນທີ່ຜ່ານມາ, ພ້ອມດຽວກັນນັ້ນກໍ່ມີຈານວນ 27 ໂຄງ ການໄດ້ຈັດຕັ້ງປະຕິບັດຄືບໜ້າຫລາຍກວ່າ 50 % ຂອງໜ້າວຽກທັງໝົດ ແລະ ຄາດວ່າຈະສຳເລັດໃນມໍ່ໆນີ້. ສຳລັບໂຄງ ການທີ່ເຫລືອຖືວ່າເປັນໂຄງການທີ່ຂ້ອນຂ້າງລ້າຊ້າເນື່ອງໂຄງການເຫລົ່ານັ້ນຕັ້ງຢູ່ເຂດທຸລະກັນດານ ສະນັ້ນພາກສ່ວນທີ່ກ່ຽວຂ້ອງແມ່ນໄດ້ປຶກສາຫາລືເພື່ອຫາທາງອອກ ທີ່ມີເຫດຜົນໂດຍການປະສານສົມທົບກັບອຳນາດການປົກຄອງເມືອງ ເພື່ອໃຫ້ໂຄງການເຫລົ່ານັ້ນສຳເລັດ ແລະ ອຳນວຍຄວາມສະດວກສູງສຸດແກ່ຊຸມຊົນ ໂດຍການຕິດ ຕາມຢ່າງປົກກະຕິຂອງພະນັກງານ ທລຍ ແລະ ອົງການກ່ຽວຂ້ອງຂັ້ນທ້ອງຖິ່ນ (ລາຍລະອຽດຕາມຕາຕະລາງ 1 ແລະ 2)

ຕາຕະລາງ 1. ຄວາມຄືບໜ້າແບ່ງຕາມຂະແໜງການ

| ຂະແໜງການ | ຈຳນວນໂຄງການ | 0% | <50% | >50% | 100% |
|---|---|---|---|---|---|
| ຄົມມະນາຄົມ | 57 | 0 | 3 | 6 | 48 |
| ສຶກສາ | 119 | 1 | 5 | 7 | 106 |
| ພະລັງງານ ແລະ ບໍ່ແຮ່ | 6 | 0 | 2 | 0 | 4 |
| ນ້ຳສະອາດ ແລະ ສຸຂະອະນາໄມ | 91 | 1 | 5 | 10 | 75 |
| ກະສິກຳ ແລະ ປ່າໄມ້ | 38 | 0 | 2 | 1 | 35 |
| ສາທາລະນະສຸກ | 22 | 0 | 1 | 3 | 18 |
| ລວມ | **333** | **2** | **18** | **27** | **286** |

*ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ທັນວາ 2014*

ຕາຕະລາງ 2. ຄວາມຄືບໜ້າແບ່ງຕາມແຂວງ

| ແຂວງ | ຈຳນວນໂຄງການ | 0% | <50% | >50% | 100% |
|---|---|---|---|---|---|
| ແຂວງ ສະຫວັນນະເຂດ | 45 | 0 | 7 | 9 | 29 |
| ແຂວງ ສາລະວັນ | 16 | 0 | 2 | 4 | 10 |
| ແຂວງ ຊຽງຂວາງ | 29 | 0 | 0 | 0 | 29 |
| ແຂວງ ຜົ້ງສາລີ | 23 | 0 | 0 | 0 | 23 |
| ແຂວງ ຫລວງນ້ຳທາ | 16 | 0 | 0 | 2 | 14 |
| ແຂວງ ຫົວພັນ | 69 | 0 | 0 | 3 | 66 |
| ແຂວງ ຫຼວງພະບາງ | 43 | 0 | 0 | 5 | 38 |
| ແຂວງ ອຸດົມໄຊ | 54 | 0 | 0 | 0 | 54 |
| ແຂວງ ອັດຕະປື | 18 | 2 | 7 | 1 | 8 |
| ແຂວງ ເຊກອງ | 20 | 0 | 2 | 3 | 15 |
| **ລວມ** | **333** | **2** | **18** | **27** | **286** |

*ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ທັນວາ 2014.*

### 2.1.2. ດ້ານການເງິນ

ສຳລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນ ທັນວາ 2014 ໄດ້ມີການເບີກຈ່າຍສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ແມ່ນ 49,837,300,568 ກີບ ເທົ່າກັບ 64,23% ຂອງງົບປະມານທັງໝົດ (**77,590,771,510** ກີບ) ສຳລັບການຈັດຕັ້ງປະຕິບັດໂຄງການໃນຮອບວຽນດັ່ງກ່າວ ແລະ ຍັງມີບາງແຂວງແມ່ນກຳລັງຢູ່ໃນຂັ້ນຕອນການກະກຽມເອກະສານ. ເຊິ່ງລາຍລະອຽດດັ່ງຕາຕະລາງ 3 ລຸ່ມນີ້:

ຕາຕະລາງ 3. ຄວາມຄືບໜ້າດ້ານການເງິນ (ກີບ)

| ແຂວງ | ງົບປະມານ (USD) | ງົບປະມານ (LAK) | 1st | 2nd | 3rd | 1st+2nd+3rd |
|---|---|---|---|---|---|---|
| ຫົວພັນ | 1,718,110 | 13,744,881,007 | 5,373,942,128 | 3,661,067,938 | - | 9,035,010,066 |
| ສະຫວັນນະເຂດ | 1,412,226 | 11,297,809,236 | 3,356,662,465 | 1,924,239,403 | - | 5,280,901,868 |
| ຊຽງຂວາງ | 845,871 | 6,766,964,761 | 1,700,698,641 | 1,460,862,133 | - | 3,161,560,774 |
| ສາລະວັນ | 549,360 | 4,394,878,390 | 573,531,467 | 88,371,020 | - | 661,902,487 |
| ຫລວງນ້ຳທາ | 445,274 | 3,562,188,983 | 1,742,680,071 | 1,383,587,508 | 70,605,161 | 3,196,872,740 |
| ເຊກອງ | 672,229 | 5,377,831,629 | 3,116,913,054 | 1,364,881,585 | 70,294,377 | 4,552,089,016 |
| ອັດຕະປື | 522,001 | 4,176,007,158 | 1,090,573,811 | - | - | 1,090,573,811 |
| ຜົ້ງສາລີ | 618,719 | 4,949,755,094 | 2,179,070,266 | 949,085,637 | 84,271,446 | 3,212,427,349 |
| ອຸດົມໄຊ | 1,648,401 | 13,187,209,433 | 7,721,285,050 | 4,666,551,771 | - | 12,387,836,821 |
| ຫລວງພະບາງ | 1,266,656 | 10,133,245,819 | 5,281,789,198 | 1,976,336,438 | - | 7,258,125,636 |
|  | 9,698,846 | 77,590,771,510 | 32,137,146,151 | 17,474,983,433 | 225,170,984 | 49,837,300,568 |

*ແຫຼ່ງຂໍ້ມູນ: ພະແນກບໍລິຫານ-ການເງິນ ທລຍ, ທັນວາ 2014*

IDA : ອົງການຈັດຕັ້ງເພື່ອການພັດທະນາລະຫວ່າງປະເທດ/ກອງທຶນສາກົນເພື່ອລຸດຜ່ອນຄວາມທຸກຍາກ (ທະນາຄານໂລກ).

SDC : ອົງການຮ່ວມມືເພື່ອການພັດທະນາປະເທດສະວິດເຊີແລນ.

Water : ໂຄງການກ່ຽວກັບນ້ຳສະອາດຂອງ SDC.

GOL : ໂຄງການລົງທຶນທຶນລັດຖະບານ.

### 2.1.3. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 11 (GOL) ຮອດທ້າຍເດືອນ ທັນວາ 2014

ໃນນັ້ນເປັນໂຄງການທີ່ລັດຖະບານໃຫ້ການສະໜັບສະໜູນທັງໝົດຈຳນວນ 63 ໂຄງການ ຢູ່ແຂວງຫົວພັນ, ແຂວງຊຽງຂວາງ, ແຂວງສະຫວັນນະເຂດ, ແຂວງສາລະວັນ ແລະ ແຂວງອັດຕະປື. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍໃນບ້ວງທຶນລົງທຶນຂອງລັດຖະບານ ມາຮອດ ທ້າຍເດືອນ ທັນວາ 2014, ມີ 46 ໂຄງການແມ່ນໄດ້ຈັດຕັ້ງປະຕິບັດສຳເລັດແລ້ວ 100 %, ສ່ວນໂຄງການທີ່ຍັງເຫລືອແມ່ນຢູ່ໃນຂັ້ນຕອນຈັດຕັ້ງປະຕິບັດ ແລະ ຄາດວ່າຈະສາມາດສຳເລັດໃນໄວໆນີ້.(ລາຍລະອຽດເບິ່ງຕາຕະລາງ 4 ແລະ 5 ລຸ່ມນີ້).

ຕາຕະລາງ 4 : ໂຄງການສືບທົບທຶນລັດຖະບານຮອບວຽນ 11 ຮອດທ້າຍເດືອນ ທັນວາ 2014 (ແຍກຕາມຂະແໜງ)

| ຂະແໜງການ | ຈໍານວນໂຄງການ | 0% | <50% | >=50% | 100% |
|---|---|---|---|---|---|
| ຄົມມະນາຄົມ | 3 | 0 | 1 | 0 | 2 |
| ສຶກສາ | 33 | 0 | 5 | 4 | 24 |
| ພະລັງງານ ແລະ ບໍ່ແຮ່ | 0 | 0 | 0 | 0 | 0 |
| ນໍ້າສະອາດແລະສຸຂະອະນາໄມ | 12 | 0 | 2 | 1 | 9 |
| ກະສິກໍາ ແລະ ປ່າໄມ້ | 8 | 0 | 1 | 1 | 6 |
| ສາທາລະນະສຸກ | 7 | 0 | 1 | 1 | 5 |
| ລວມ | 63 | 0 | 10 | 7 | 46 |

*ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ທັນວາ 2014.*

ຕາຕະລາງ 5: ໂຄງການສືບທົບທຶນລັດຖະບານຮອບວຽນ 11 ຮອດທ້າຍເດືອນ ທັນວາ 2014 (ແຍກຕາມແຂວງ)

| ແຂວງ | ຈໍານວນໂຄງການ | 0% | <50% | >=50% | 100% |
|---|---|---|---|---|---|
| ແຂວງ ສະຫວັນນະເຂດ | 15 | 0 | 6 | 2 | 7 |
| ແຂວງ ສາລະວັນ | 6 | 0 | 0 | 3 | 3 |
| ແຂວງ ຊຽງຂວາງ | 15 | 0 | 0 | 0 | 15 |
| ແຂວງ ຫົວພັນ | 20 | 0 | 0 | 1 | 19 |
| ແຂວງ ອັດຕະປື | 7 | 0 | 4 | 1 | 2 |
| ລວມ | **63** | **0** | **10** | **7** | **46** |

*ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ທັນວາ 2014.*

## 2. 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ບັນດາໂຄງການຍ່ອຍໃນຮອບວຽນ 9 ແລະ 10

ໃນຮອບວຽນທີ 9 ທລຍ ໄດ້ໃຫ້ການສະໜັບສະໜູນຈໍານວນທັງໝົດ 262 ໂຄງການ ຢູ່ 7 ແຂວງເປົ້າໝາຍ (ອັດຕະປື, ເຊກອງ, ສາລະວັນ, ສະຫວັນນະເຂດ, ຫົວພັນ, ຊຽງຂວາງ ແລະ ຫລວງນໍ້າທາ) ແລະ ນໍາໃຊ້ງົບປະມານທັງໝົດ 7,653,772 ໂດລາສະຫະລັດ. ມີພຽງຈໍານວນ 257 ໂຄງການເທົ່ານັ້ນທີ່ໄດ້ຈັດຕັ້ງປະຕິບັດສໍາເລັດ 100 % ແລະ ງົບປະມານທີ່ໄດ້ນໍາໃຊ້ 7,478,310 ໂດລາສະຫະລັດ ຫລື 98% ຂອງງົບປະມານທັງໝົດ. ເຊິ່ງການຈັດຕັ້ງປະຕິບັດ ບາງໂຄງການໃນຮອບວຽນດັ່ງກ່າວແມ່ນຍັງມີຄວາມຫລ້າຊ້າ ແລະ ບໍ່ສໍາເລັດຕາມຄາດໝາຍ, ມີ 4 ໂຄງການຍັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດຄື 1 ໂຄງການທີ່ຢູ່ແຂວງ ເຊກອງ ແລະ 3 ໂຄງການຢູ່ແຂວງ ອັດຕະປື ແລະ ສ່ວນ 1 ໂຄງການ ຢູ່ແຂວງ ຫລວງນໍ້າທາ ນັ້ນແມ່ນໄດ້ຍົກເລີກການກໍ່ສ້າງ. ສໍາລັບຄວາມຫລ້າຊ້າໃນການຈັດຕັ້ງປະຕິບັດໂຄງການດັ່ງກ່າວແມ່ນກ່ຽວຂ້ອງກັບທີ່ຕັ້ງໂຄງການ ແລະ ດິນຟ້າ ອາກາດ ແລະ ບັນຫາອື່ນ ໆ ເພື່ອແກ້ໄຂບັນຫາດັ່ງກ່າວ ທລຍ ແລະ ພາກສ່ວນທີ່ກ່ຽວຂ້ອງໄດ້ປະສານສົມທົບກັບອໍານາດການປົກຄອງທ້ອງຖິ່ນ ເພື່ອແກ້ໄຂ ແລະ ເຮັດໃຫ້ໂຄງການດັ່ງກ່າວປະສົບຜົນສໍາເລັດໄວໆນີ້.

ໃນຮອບວຽນທີ 10 ທລຍ ໄດ້ໃຫ້ການສະໜັບສະໜູນທັງໝົດ 393 ໂຄງການ ແລະ ງົບປະມານທັງໝົດຈໍານວນ 9,889,886 ດອນລາສະຫະລັດ. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແມ່ນຄືກັບທີ່ໄດ້ລາຍງານໃນເດືອນຜ່ານມາ, ມີຈໍານວນ 391 ໂຄງການທີ່ໄດ້ສໍາເລັດການກໍ່ສ້າງ ແລະ ງົບປະມານ 9,639,698 ໂດລາສະຫະລັດ (97%) ແມ່ນໄດ້ຖືກໂອນສໍາລັບການຈັດຕັ້ງປະຕິບັດໂຄງການຍ່ອຍເຫລົ່ານັ້ນ. ສໍາລັບ 2 ໂຄງການ ແມ່ນຍັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດຄື: 1 ໂຄງການຢູ່ແຂວງ ຫຼວງນໍ້າທາ ເມືອງນາແລ ກຸ່ມສະແກນ (ບ້ານສະແກນ) ເປັນໂຄງການກໍ່ສ້າງຂົວອູ່ ມີຄວາມລ້າຊ້າ

ເນື່ອງຈາກວ່າໂຄງການດັ່ງກ່າວເປັນໂຄງການທົດລອງ ແລະ ເປັນໂຄງການຂະໜາດໃຫຍ່ ອຸປະກອນສ່ວນໃຫຍ່ແມ່ນນຳມາຈາກຕ່າງປະເທດ (ປະເທດຫວຽດນາມ), ເປັນທຶນສົມທົບລະຫວ່າງ ທລຍ ແລະ ພາກສ່ວນອື່ນ ແລະ 1 ໂຄງການຢູ່ແຂວງຫຼວງພະບາງ ເມືອງໂພນໄຊ ບ້ານຫ້ວຍປຽນ ໂຄງການກໍ່ສ້າງໂຮງຮຽນ ຊັກຊ້າເນື່ອງຈາກວ່າທາງເຂົ້າບ້ານຂາດຍ້ອນໄພທຳມະຊາດໃນເດືອນສິຫາ 2014, ແຕ່ພາຍຫລັງເດືອນພະຈິກ 2014 ແມ່ນສາມາດຂົນວັດສະດຸອຸປະກອນເຂົ້າໄປໃນພື້ນທີ່ກໍ່ສ້າງ ແລະ ຄວາມຄືບໜ້າໃນການກໍ່ສ້າງແມ່ນ 95 % ແລ້ວ (ຕາມການລາຍງານຂອງແຂວງໃນວັນທີ່ 5 ມັງກອນ 2015)

### *III. ການຈັດຕັ້ງປະຕິບັດວຽກງານວິຊາສະເພາະ*

**ວຽກພັດທະນາຊຸມຊົນ**

1. ສຳເລັດໃນການສັງລວມເກັບກຳຂໍ້ມູນຈາກ 5 ເມືອງທົດລອງ ຮູບແບບ CDD[1] ໂດຍສະເພາະແມ່ນຂໍ້ມູນ ການຈັດກອງປະຊຸມແນະນຳໂຄງການຂັ້ນບ້ານ, ການວາງແຜນພັດທະນາຂັ້ນບ້ານ, ການວາງແຜນຂັ້ນກຸ່ມບ້ານ ແລະ ການວາງແຜນຂັ້ນເມືອງ.
2. ກະກຽມກອງປະຊຸມຝຶກອົບຮົມ ວິທີການຈັດຕັ້ງປະຕິບັດໂຄງການ ໂດຍເນັ້ນໃສ່ຊຸມຊົນເປັນເຈົ້າການ ສຳລັບຢູ່ບັນດາເມືອງທົດລອງ ຮູບແບບ CDD ເຊິ່ງປະກອບມີ 5 ເມືອງຄື: ເມືອງນອງ ແຂວງ ສະຫວັນນະເຂດ, ເມືອງໄຊ ແລະ ເມືອງນາໝໍ້ ແຂວງ ອຸດົມໄຊ, ເມືອງນ້ຳບາກ ແລະ ເມືອງຈອມເພັດ ແຂວງ ຫລວງພະບາງ.
3. ຕິດຕາມຊຸກຍູ້ການສຳຫລວດ - ອອກແບບ ໂຄງການຍ່ອຍ ຮອບວຽນທີ່ 12 ຢູ່ບັນດາເມືອງ ທີ່ບໍ່ໄດ້ທົດລອງ CDD.
4. ວັນທີ 15 ທັນວາ 2014 ທີມງານ ທລຍ ຈຳນວນ 3 ທ່ານ ແລະ ຄພທສ 4 ທ່ານໄດ້ເຂົ້າຮ່ວມກອງປະຊຸມສຳມະນາ ແລະ ວາງສະແດງ ເພື່ອລະນຶກວັນສາກົນຢຸດຕິຄວາມຮຸນແຮງຕໍ່ແມ່ຍິງ ວັນທີ 25 ພະຈິກ ຊຶ່ງຈັດຂຶ້ນທີ່ສູນການຄ້າລາວ-ໄອເຕັກ. ການວາງສະແດງມີທັງໝົດ 17 ອົງການຈັດຕັ້ງຕ່າງໆ ໃນນັ້ນ ບູດວາງສະແດງຜົນງານການປ້ອງກັນ ແລະ ລຶບລ້າງທຸກຄວາມຮຸນແຮງຕໍ່ແມ່ຍິງຂອງຫ້ອງການ ຄພທສ-ທລຍ ແມ່ນໄດ້ຮັບລາງວັນທີ II ເພາະໄດ້ນຳເອົາຜົນຈາກການຈັດຕັ້ງປະຕິບັດວຽກງານຕົວຈິງຂອງ ຄພທສ-ທລຍ ທີ່ຕິດພັນກັບການສົ່ງເສີມສິດສະເໝີພາບຍິງຊາຍ, ການພັດທະນາແມ່ຍິງ ແລະ ວຽກງານແມ່ ແລະ ເດັກມາວາງສະແດງ.
5. ສັງລວມຂໍ້ມູນທີມງານຈັດຕັ້ງປະຕິບັດຂັ້ນບ້ານ ສຳລັບ ທລຍ ຮອບວຽນ 12 ທີ່ມີຢູ່ແຕ່ລະເມືອງເປົ້າໝາຍໄດ້ 20 ກວ່າເມືອງ ແລະ ຈະສືບຕໍ່ສັງລວມໃຫ້ໄດ້ໝົດທຸກໆ ເມືອງ ທັງນີ້ກໍ່ເພື່ອວິເຄາະຂໍ້ມູນແຍກເພດ ເພື່ອແນ່ໃສ່ສົ່ງເສີມຄວາມກ້າວໜ້າໃຫ້ແກ່ແມ່ຍິງທີ່ເປັນທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຜ່ານຂະບວນການຈັດຕັ້ງປະຕິບັດວຽກງານ ທລຍ ໄລຍະ II.
6. ກະກຽມ ແລະ ສັງລວມຄຳຄິດເຫັນກ່ຽວກັບເນື້ອໃນປຶ້ມຄູ່ມືການຮຽນ ແລະ ການສອນ ກ່ຽວກັບ ສິດສະເໝີພາບຍິງຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ສຳລັບຜູ້ປະສານງານກຸ່ມບ້ານ, ປຶ້ມດັ່ງກ່າວຍັງບໍ່ທັນໄດ້ຜະລິດ ແລະ ແຈກຢາຍເທື່ອ ເນື່ອງຈາກຍັງຢູ່ໃນຂັ້ນຕອນສັງລວມຄຳຄິດເຫັນ ແລະ ກວດແກ້ຄວາມລະອຽດ ແລະ ຖືກຕ້ອງກ່ອນ.
7. ເພີ້ມຂ່າວປະຈຳວັນ ຈຳນວນ 2 ເລື່ອງ ລົງໃນ Website ຂອງ ທລຍ ກ່ຽວກັບຜົນສຳເລັດຫົວໜ້າຫ້ອງການທະນາຄານໂລກ ປະຈຳລາວເຂົ້າລາຍງານຜົນຂອງການກວດກາ ການຈັດຕັ້ງປະຕິບັດວຽກງານ ທລຍ 2 ປະຈຳ 6

[1] ແມ່ນການພັດທະນາທີ່ຂັດເກືອນໂດຍຊຸມຊົນ (Deepen Community Driven Development)

ເດືອນທ້າຍປີ 2014 ພາສາລາວ ແລະ ພາສາອັງກິດ, ຝຶກອົບຮົມຄູ່ມືຄອງນຳໃຊ້ໂຄງການກໍ່ສ້າງໂຮງຮຽນປະຖົມ ບ້ານຈ່າຄຳປິງ ກຸ່ມບ້ານສີວິໄລ ເມືອງລອງແຂວງ ຫລວງນ້ຳທາ ຮອບວຽນທີ 11, ແລະ ສົ່ງໃຫ້ໜັງສືພິມວຽງຈັນໃໝ່, Vientianetime, ປະຊາຊົນເພື່ອອອກຂ່າວທາງໜ້າໜັງສືພິມ.

8. ກະກຽມ ແລະ ປັບປຸງ ຮ່າງ MOU ເພື່ອສືບຕໍ່ເຊັນສັນຍາຮ່ວມສະຖາບັນວິທະຍຸແຫ່ງຊາດ, ສະຫະພັນແມ່ຍິງ ແລະ ບັນດາແຂວງ, ເມືອງເປົ້າໝາຍ.
9. ສຳເລັດການວາງສະແດງຮູບພາບ ໃນກອງປະຊຸມສະຫລຸບໂຄງການ LUFSIP ກອງປະຊຸມ ສຳມະນາ ແລະ ວາງສະແດງຜົນງານ ການປ້ອງກັນ ແລະ ລົບລ້າງ ຄວາມຮຸນແຮງຕໍ່ແມ່ຍິງ ເພື່ອລະນຶກວັນສາກົນຍຸດຕິຄວາມຮຸນແຮງຕໍ່ແມ່ຍິງ.
10. ສຳເລັດ ການຮ່າງເນື້ອໃນ ສາລະຄະດີ ກ່ຽວກັບ ໂຄງການຕົວແບບຂອງ ໂຄງການ ທລຍ/ກປຝ 2 ເລື່ອງ ຄືການຕ່ຳຫູກບ້ານແກ້ງກິວ ເມືອງເຊໂປນ ແຂວງ ສະຫວັນນະເຂດ ແລະ ເຕັກນິກການລ້ຽງສັດ ບ້ານຫ້ວຍສາ ເມືອງຮ້ຽມ ແຂວງ ຫົວພັນ.
11. ສຳເລັດການປະມູນກ່ຽວກັບການສ້າງ VCD ກ່ຽວກັບເຕັກນິກການກໍ່ສ້າງລະບົບນ້ຳລິນ, ນ້ຳບາດານ ແລະ ອາຄານ ລວມທັງ ເຕັກນິກການບູລະນະສ້ອມແປງໂຄງການດັ່ງກ່າວ ທັງໝົດ 6 ເລື່ອງ.
12. ສຳເລັດການຮ່າງພາລະບົດບາດເພື່ອຈັດຫາຜູ້ຜະລິດເຄື່ອງມື ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ສົ່ງໃຫ້ທະນາຄານໂລກ.

**ວຽກວິສະວະກຳ**

1. ສືບຕໍ່ສັງລວມ ແລະ ຕິດຕາມໂຄງການຍ່ອຍຮອບວຽນ 12 ແລະ GOL ສົ່ງໃຫ້ທະນາຄານໂລກເພື່ອຂໍອະນຸມັດໂຄງການ.
2. ສືບຕໍ່ສັງລວມໂຄງການຍ່ອຍ 5 ປີຜ່ານມາຂອງ ແຂວງ ຫົວພັນ, ສະຫວັນນະເຂດ, ເຊກອງ, ແລະ ແຂວງ ອັດຕະປື ເພື່ອສົ່ງໃຫ້ຊ່ຽວຊານໃນການປະເມີນປຽບທຽບໃນການປ່ຽນແປງລາຄາ.
3. ຕິດຕາມການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນທີ່ 11 ແລະ ສືບຕໍ່ຕິດຕາມການສຳຫລວດ-ອອກແບບໂຄງການຍ່ອຍຮອບວຽນທີ່ 12 ຢູ່ແຂວງ ຫລວງພະບາງ.
4. ສືບຕໍ່ສັງລວມຮູບພາບ pictogramme ຂອງແຕ່ລະປະເພດໂຄງການຍ່ອຍ ເພື່ອໃຫ້ເປັນບົດຮຽນໃຫ້ແກ່ຊຸມຊົນເພື່ອສົມທຽບໂຄງການອັນໃດທີ່ໄດ້ມາດຕະຖານ ແລະ ອັນໃດທີ່ບໍ່ໄດ້ມາດຕະຖານ.
5. ສືບຕໍ່ຕິດຕາມການຮ່ວມມືລະຫວ່າງ ທລຍ ແລະ ILO (International labour Oganization).
6. ສຳເລັດກອງປະຊຸມຮ່ວມກັບ WSP ( Water and sanitation Project) ເພື່ອສຶກສາຄວາມເປັນໄປໄດ້ໃນການຮ່ວມມື ແລະ ສຳເລັດກອງປະຊຸມແລກປ່ຽນບົດຮຽນກັບ KDP (Kammouan Development Project) ທີ່ແຂວງຄຳມ່ວນ.
7. ສຳເລັດການອອກແບບສຸກສາລາ ແລະ ຝຶກອົບຮົມການນຳໃຊ້ ແລະ ບຳລຸງຮັກສາ (Operation and Maintenance)
8. ສຳເລັດການລົງກວດກາ ການຈັດຕັ້ງປະຕິບັດໂຄງການຍ່ອຍທຶນລັດຖະບານຮອບວຽນ 10 ແລະ 11.

**ວຽກງານຈັດຕັ້ງ**

1. ໄດ້ສຳເລັດການປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານ ຕຳແໜ່ງລຸ່ມນີ້:
   - ພະນັກງານວິສະວະກອນປະຈຳ ເມືອງໃໝ່, ແຂວງ ຜົ້ງສາລີ 01 ຕຳແໜ່ງ: ຈະເລີ້ມປະຈຳການໃນວັນທີ 01 ມັງກອນ 2015.
   - ພະນັກງານວິສະວະກອນປະຈຳ ເມືອງສະໝ້ອຍ, ແຂວງ ສາລະວັນ 01 ຕຳແໜ່ງ: ຈະເລີ້ມປະຈຳການໃນວັນທີ 12 ມັງກອນ 2015.
   - ພະນັກງານວິເຄາະ ແລະ ປະເມີນຜົນ ປະຈຳ ທລຍ ສູນກາງ: ຈະເລີ້ມປະຈຳການໃນວັນທີ 12 ມັງກອນ 2015.
   - ປະສານງານຂັ້ນບ້ານດ້ານປັບປຸງຊີວິດການເປັນຢູ່ ປະຈຳເມືອງເຊໂປນ 02 ຕຳແໜ່ງ (ເລີ້ມປະຈຳການວັນທີ 22 ທັນວາ2014), ເມືອງຊ່ອນ 01 ຕຳແໜ່ງ, ເມືອງຮົ້ງມ 01 ຕຳແໜ່ງ ເລີ້ມປະຈຳການວັນທີ 10 ທັນວາ 2014.
   - ປະສານງານຂັ້ນບ້ານດ້ານໂພຊະນາການ ປະຈຳເມືອງນອງ 01 ຕຳແໜ່ງ (ເລີ້ມປະຈຳການວັນທີ 22 ທັນວາ 2014), ເມືອງຊ່ອນ 01 ຕຳແໜ່ງ, ເມືອງເຊໂປນ 01 ຕຳແໜ່ງ ເລີ້ມປະຈຳການວັນທີ 10 ທັນວາ 2014.
   - ປະສານງານປະຈຳເມືອງຮົ້ງມ 01 ຕຳແໜ່ງ, ເລີ້ມປະຈຳການວັນທີ 01 ທັນວາ 2014.
   - ປະເມີນ ແລະ ຄັດເລືອກຊ່ຽວຊານຕ່າງປະເທດ 02 ຕຳແໜ່ງ: ຊ່ຽວຊານວາງແຜນງົບປະມານ (ໄດ້ປະກາດຮັບສະໝັກຄືນໃໝ່ ເນື່ອງຈາກວ່າການປະກາດຮັບສະໝັກຊຸດກ່ອນນັ້ນ ຍັງບໍ່ໄດ້ຮັບຜູ້ສະໝັກທີ່ມີເງື່ອນໄຂເໝາະສົມ ແລະ ຕ້ອງການ) ແລະ ຊ່ຽວຊານດ້ານນະໂຍບາຍບຸກຄະລາກອນ (ປະຈຸບັນຢູ່ໃນຂັ້ນຕອນການເຈລະຈາສັນຍາ ເຊິ່ງຄາດຄະເນຈະໄດ້ເລີ້ມວຽກຕົວຈິງໃນກາງເດືອນມັງກອນ 2015).
2. ສືບຕໍ່ທົບທວນກອບໜ້າວຽກຂອງແຕ່ລະຕຳແໜ່ງ: ໄດ້ປະຕິບັດສຳເລັດແລ້ວ 50 ສ່ວນຮ້ອຍ ແຕ່ຕ້ອງໄດ້ຜ່ານ ແລະ ຮັບການຢັ້ງຢືນຈາກຄະນະບໍລິຫານໂຄງການກ່ອນ ຈິ່ງຈະສາມາດນຳໃຊ້ຢ່າງເປັນທາງການໄດ້.
3. ສືບຕໍ່ປະຕິບັດການປະເມີນຜົນການຈັດຕັ້ງປະຕິບັດວຽກພະນັກງານ ປະຈຳປີ 2014 ເພື່ອອອກສັນຍາປີ 2015: ໄດ້ປະຕິບັດສຳເລັດແລ້ວ 80 ສ່ວນຮ້ອຍ, ສ່ວນຍັງເຫລືອແມ່ນການປະເມີນຜົນຂອງສະມາຊິກຄະນະບໍລິຫານໂຄງການ (ຫົວໜ້າພະແນກ 4 ທ່ານ) ແລະ ຜູ້ປະສານງານ ທລຍ 10 ແຂວງ.
4. ອອກສັນຍາເຮັດວຽກຂອງພະນັກງານ ປະຈຳປີ 2015: ຍັງບໍ່ສາມາດອອກສັນຍາໃຫ້ພະນັກງານໄດ້ ເນື່ອງຈາກລໍຖ້າການອະນຸມັດ ກ່ຽວກັບການປ່ຽນແປງນະໂຍບາຍບາງອັນ ຈາກຜູ້ໃຫ້ທຶນ.
5. ສືບຕໍ່ສັງລວມ ແລະ ປະເມີນຜົນການປະຕິບັດວຽກພະນັກງານ ທລຍ ສູນກາງ ຕາມແບບຟອມຂອງ ຄພທສ: ໄດ້ສຳເລັດວຽກງານດັ່ງກ່າວຮ້ອຍສ່ວນຮ້ອຍ ແລະ ໄດ້ສົ່ງຜົນສັງລວມໃຫ້ ຄພທສ ແລ້ວ ໃນເດືອນ ທັນວາ 2014.

**ວຽກຕິດຕາມ ແລະ ປະເມີນຜົນ**

1. ພະແນກຕິດຕາມ-ປະເມີນຜົນ ໄດ້ຈັດຝຶກອົບຮົມກ່ຽວກັບການວິເຄາະ ແລະ ນຳໃຊ້ຕົວຊີ້ວັດຜົນໄດ້ຮັບຂອງ ທລຍ 2 ໃນວັນທີ 22 ທັນວາ 2014 ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 12 ຄົນເປັນຍິງ 3 ຄົນ, ຈຸດປະສົງຂອງການຝຶກອົບຮົມແມ່ນ ເພື່ອທຳຄວາມເຂົ້າໃຈໃຫ້ພະນັກງານ ຕິດຕາມ-ປະເມີນຜົນ ຂັ້ນສູນກາງ ລວມທັງພະນັກງານທີ່ກ່ຽວຂ້ອງຈາກພະແນກຕ່າງໆ ໃຫ້ມີຄວາມເຂົ້າໃຈທີ່ເປັນເອກະພາບກັນ ກ່ຽວກັບຕົວຊີ້ວັດຜົນໄດ້ຮັບ ທີ່ໄດ້ລະບຸໄວ້ໃນຄູ່ມືການຈັດຕັ້ງປະຕິບັດວຽກງານ ທລຍ. ຜົນຂອງການຝຶກອົບຮົມແມ່ນຖືວ່າພະນັກງານທຸກຄົນແມ່ນມີຄວາມເຂົ້າໃຈ ແລະ ສາມາດທີ່ຈະນຳເອົາຄວາມຮູ້ດັ່ງກ່າວໄປຜັນຂະຫຍາຍໃຫ້ພະນັກງານຢູ່ຂັ້ນແຂວງ ແລະ ເມືອງ ໃນວາລະຕໍ່ໄປ.

2. ສຳເລັດການດັດແກ້ບົດລາຍງານປະຈຳສົກປີ 2013 - 2014 ຕາມຄຳແນະນາຂອງຜູ້ໃຫ້ທຶນ ແລະ ກະກຽມເພື່ອເອົາຂຶ້ນ Website ຂອງ ທລຍ, ບົດລາຍງານດັ່ງກ່າວໄດ້ສະແດງໃຫ້ເຫັນເຖິງຜົນສາເລັດຂອງການຈັດຕັ້ງປະຕິບັດວຽກງານ ທລຍ ລວມທັງສິ່ງທ້າທາຍ ແລະ ບົດຮຽນຕ່າງໆ ທີ່ໄດ້ຮັບຈາກການຈັດຕັ້ງປະຕິບັດຕົວຈິງ, ຍ້ອນການປະຕິບັດຕາມລະບຽບຫລັກການຢ່າງເຄັ່ງຄັດ ຂອງ ທລຍ ຈຶ່ງເຮັດໃຫ້ຜູ້ໃຫ້ທຶນມີຄວາມເພິ່ງພໍໃຈ ແລະ ສະແດງເຈດຈຳນົງທີ່ຈະໃຫ້ການສະໜັບສະໜູນ ໄລຍະສືບຕໍ່ຂອງ ທລຍ ຈົນຮອດປີ 2017.
3. ຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍໃນແຕ່ລະແຂວງ ໂດຍສະເພາະບັນດາໂຄງການທີ່ມີຄວາມລ້າຊ້າໃນຮອບວຽນຜ່ານມາ (ຮອບວຽນ 9, 10 ແລະ 11) ທັງນີ້ກໍເພື່ອຫາທາງແກ້ໄຂ ເພື່ອໃຫ້ໂຄງ ການດັ່ງກ່າວສຳເລັດຕາມຄາດໝາຍ ແລະ ອຳນວຍຄວາມສະດວກໃຫ້ແກ່ຊຸມຊົນ.
4. ສັງລວມບັນດາໂຄງການຍ່ອຍທີ່ຈະຈັດຕັ້ງປະຕິບັດສຳລັບຮອບວຽນ 12 ສົກປີ 2014 - 2015 ທີ່ເປັນທຶນຊ່ວຍເຫລືອຂອງຕ່າງປະເທດ ແລະ ສົ່ງໃຫ້ຜູ້ໃຫ້ທຶນເພື່ອຂໍອະນຸມັດໃນການຈັດຕັ້ງປະຕິບັດ.

**ຈັດຊື້-ຈັດຈ້າງ**

1. ສຳເລັດການປະມູນຈັດຊື້ອຸປະກອນການແພດ (ເຄື່ອງແທກລວງສູງ ແລະ ຊິງສັ່ງນ້ຳໜັກ) ໃຫ້ໂຄງການ LONG ແລະ ກຽມຈັດຊື້ເຄື່ອງມື IEC ໃຫ້ພະແນກພັດທະນາຊຸມຊົນ.
2. ສຳເລັດການກວດກາງົບປະມານການເປີດຊອງປະມູນໂຄງການລັດຖະບານຂອງແຂວງ ສາລະວັນ ແລະ ການກວດກາງົບປະມານການຝຶກອົບຮົມວຽກງານຈັດຊື້ຈັດຈ້າງ ໃຫ້ທີມງານຈັດຕັ້ງປະຕິບັດຂັ້ນບ້ານ.
3. ສຳເລັດການກວດກາຜົນການເປີດຊອງປະມູນ ແລະ ອານຸມັດໃຫ້ເຊັນສັນຍາໂຄງການທຶນສົມທົບຈາກລັດຖະບານ ແຂວງ ຫົວພັນ, ສະຫວັນນະເຂດ ແລະ ແຂວງ ຊຽງຂວາງ.
4. ສຳເລັດການປັບປຸງແຜນການຈັດຊື້-ຈັດຈ້າງ ຂອງ ທລຍ ແລະ LONG ສົ່ງໃຫ້ຜູ້ໃຫ້ທຶນ.
5. ສຳເລັດການກວດກາແຜນ ແລະ ອານຸມັດງົບປະມານການຈັດຝຶກອົບຮົມວຽກງານບໍລິຫານການເງິນ ແລະ ວຽກງານຈັດຊື້ຈັດຈ້າງໃຫ້ກັບທີມງານຈັດຕັ້ງປະຕິບັດຂັ້ນບ້ານ ທລຍ ແຂວງຫົວພັນ.
6. ສຳເລັດການກວດກາແຜນ ແລະ ອານຸມັດງົບປະມານການຈັດຝຶກອົບຮົມວຽກງານບໍລິຫານການເງິນ ແລະ ວຽກງານຈັດຊື້ຈັດຈ້າງໃຫ້ກັບໜ່ວຍງານຈັດຕັ້ງປະຕິບັດຂັ້ນບ້ານ ທລຍ ແຂວງ ຜົ້ງສາລີ.
7. ສຳເລັດການກວດກາ ແລະ ອະນຸມັດງົບປະມານການຈັດຝຶກອົບຮົມວຽກງານຈັດຊື້-ຈັດຈ້າງ ແລະ ວຽກງານບໍລິຫານການເງິນ ໃຫ້ກັບໜ່ວຍງານຈັດຕັ້ງປະຕິບັດ ເມືອງນາໝໍ້ ແລະ ເມືອງໄຊ ແຂວງ ອຸດົມໄຊ.

## *V. <u>ແຜນການຈັດຕັ້ງປະຕິບັດສຳລັບເດືອນ ມັງກອນ 2015</u>*

ສຳລັບເດືອນ ມັງກອນ 2015 ກອງທຶນຫຼຸດຜ່ອນຄວາມທຸກຍາກ ຈະເລັ່ງໃສ່ຈັດຕັ້ງປະຕິບັດບັນດາໜ້າວຽກລຸ່ມນີ້ໃຫ້ບັນລຸຜົນສຳເລັດຕາມເປົ້າໝາຍທີ່ກຳນົດໄວ້:

**ວຽກງານຈັດຕັ້ງ:**

1. ປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານ ຕຳແໜ່ງລຸ່ມນີ້:
    - ຊ່ຽວຊານໄລຍະສັ້ນດ້ານການວາງແຜນງົບປະມານ.
    - ຫົວໜ້າໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພຊະນາການ.

- ບໍລິຫານ-ການເງິນ ປະຈຳເມືອງຕະໂອ້ຍ ແຂວງ ສາລະວັນ.

2. ສືບຕໍ່ທົບທວນໜ້າວຽກຂອງແຕ່ລະຕຳແໜ່ງຂອງພະນັກງານ ທລຍ.
3. ສືບຕໍ່ປະຕິບັດການປະເມີນຜົນການຈັດຕັ້ງປະຕິບັດວຽກພະນັກງານ ປະຈຳປີ 2014 ເພື່ອອອກສັນຍາປີ 2015
5. ດຳເນີນການ ແລະ ຕິດຕໍ່ການຊື້ປະກັນໄພປະຈຳປີ 2015 ໃຫ້ພະນັກງານ.
6. ສະແດງແຜນອາດຂອງໂຄງຮ່າງການຈັດຕັ້ງ ປະຈຳປີ 2015 ແລະ ເລີ່ມປະຕິບັດວຽກກັບຊ່ຽວຊານດ້ານນະໂຍບາຍບຸກຄະລາກອນ.

**ວຽກງານພັດທະນາຊຸມຊົນ:**

1. ຈັດກອງປະຊຸມຝຶກອົບຮົມ ວິທີການຈັດຕັ້ງປະຕິບັດໂຄງການຍ່ອຍ ພາຍໃຕ້ຮູບແບບການ ພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງທີ່ ນະຄອນຫລວງວຽງຈັນ.
2. ຈັດຕັ້ງປະຕິບັດການຈັດກອງປະຊຸມແລກປ່ຽນບົດຮຽນ ລະຫວ່າງກຸ່ມບ້ານ ແລະ ກອງປະຊຸມປະຊຸມເດືອນຂອງຜູ້ປະສານງານກຸ່ມບ້ານຢູ່ແຕ່ລະແຂວງ;
3. ເກັບກຳຂໍ້ມູນຄືນ ກ່ຽວກັບຜູ້ທີ່ໄດ້ຮັບຜົນປະໂຫຍດໂດຍກົງ ແລະ ໂດຍທາງອ້ອມ ຈາກໂຄງການຍ່ອຍ ທີ່ໄດ້ຮັບການຊ່ວຍເຫລືອ ຈາກ ທລຍ ໃນຮອບວຽນທີ່ 11 ຜ່ານມາ ໃນນີ້ທົດລອງເກັບກຳຂໍ້ມູນຢູ່ເມືອງຕະໂອ້ຍ, ແຂວງສາລະວັນ ກ່ອນທີ່ຈະນຳໃຊ້ຕາຕະລາງດັ່ງກ່າວເພື່ອເກັບຂໍ້ມູນຢູ່ເມືອງອື່ນໆໃນ 10 ແຂວງ ເປົ້າໝາຍ ທລຍ ໃນເດືອນຕໍ່ໄປ.
4. ກະກຽມຝຶກອົບຮົມການເປັນຄູຝຶກ (TOT) ໃນດ້ານການວາງແຜນພັດທະນາຂັ້ນບ້ານແບບມີສ່ວນຮ່ວມ ໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ ຂອງເມືອງຂວາ ແຂວງຜົ້ງສາລີ;
5. ປະສານງານກັບ ຄພທສ ກ່ຽວກັບ ແຜນການຈັດສຳມະນາສຳລັບພະນັກງານ ທລຍ ແລະ ຄພທສ ຂັ້ນສູນກາງໃນຫົວຂໍ້ສິດສະເໝີພາບຍິງ-ຊາຍ ແລະ ຄວາມຮຸນແຮງທີ່ມີຕໍ່ແມ່ຍິງ ທັງນີ້ກໍ່ເພື່ອປູກຈິດສຳນຶກແກ່ພະນັກງານ ທລຍ ແລະ ຄພທສ ທັງຍິງ ແລະ ຊາຍ ໃນຂັ້ນສູນກາງ ໃນຫົວຂໍ້ ສະເໝີພາບຍິງຊາຍ ແລະ ຄວາມຮຸນແຮງທີ່ມີຕໍ່ແມ່ຍິງ ທີ່ຕິດພັນກັບການຈັດຕັ້ງປະຕິ ບັດວຽກງານພັດທະນາ ແລະ ແກ້ໄຂຄວາມທຸກຍາກ.
6. ສືບຕໍ່ສັງລວມຂໍ້ມູນທີມງານຈັດຕັ້ງປະຕິບັດຂັ້ນບ້ານ ສຳລັບ ທລຍ ຮອບວຽນ 12 ທີ່ມີຢູ່ແຕ່ລະເມືອງເປົ້າໝາຍໃນທົ່ວປະເທດໃຫ້ໄດ້ໝົດທຸກໆເມືອງ ທັງນີ້ກໍ່ເພື່ອວິເຄາະຂໍ້ມູນແຍກເພດ ເພື່ອແນ່ໃສ່ສົ່ງເສີມຄວາມກ້າວໜ້າໃຫ້ແກ່ແມ່ຍິງທີ່ເປັນທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຜ່ານຂະບວນການຈັດຕັ້ງປະຕິບັດວຽກງານ ທລຍ ໄລຍະ II.
7. ສືບຕໍ່ປະສານງານກັນກັບໜ່ວຍງານ IEC ເພື່ອຜະລິດ ແລະ ແຈກຢາຍປຶ້ມຄູ່ມືການຮຽນ ແລະ ການສອນ ກ່ຽວກັບ ສິດສະເໝີພາບຍິງຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ສຳລັບຜູ້ປະສານງານກຸ່ມບ້ານ.
8. ສືບຕໍ່ປັບປຸງ ແລະ ຈັດພິມຄູ່ມື ຈັດຊື້-ຈັດຈ້າງຊຸມຊົນ.
9. ນຳພາທີມງານຈາກ ໂທລະພາບແຫ່ງຊາດ ລົງຖ່າຍທຳ DVD ກ່ຽວກັບໂຄງການຕົວແບບດ້ານການສ້າງລາຍຮັບ 2 ເລື່ອງ ຢູ່ແຂວງ ຫົວພັນ ແລະ ແຂວງ ສະຫວັນນະເຂດ.
10. ສືບຕໍ່ເຊັນສັນຍາ ກັບບັນດາສື່ມວນຊົນຕ່າງໆ ເພື່ອສືບຕໍ່ກະຈາຍຂໍ້ມູນຂ່າວສານຂອງ ທລຍ ໃນປີ 2015.
11. ຈັດພິມແຜ່ນພັບ ແນະນຳໂຄງການ ທລຍ ເປັນພາສາລາວ ແລະ ອັງກິດ ພ້ອມທັງຈັດພິມຄູ່ມື ວຽກງານບົດບາດຍິງ-ຊາຍ.

**ວຽກງານ ຕິດຕາມ ປະເມີນຜົນ:**

1. ສືບຕໍ່ສັງລວມບັນດາໂຄງການຍ່ອຍທີ່ຈະຈັດຕັ້ງປະຕິບັດສໍາລັບຮອບວຽນ 12 ສົກປີ 2014-2015 ທີ່ເປັນທຶນຊ່ວຍ ເຫລືອຂອງຕ່າງປະເທດ ແລະ ປ້ອນຂໍ້ມູນຕ່າງໆ ເຂົ້າໃນລະບົບຖານຂໍ້ມູນ.
2. ຈັດຝຶກອົບຮົມໃຫ້ພະນັກງານແຂວງ ແລະ ເມືອງ ກ່ຽວກັບຕົວຊີ້ວັດຜົນໄດ້ຮັບໂຄງການ ເພື່ອຮັບປະກັນປະສິດທິພາບຂອງວຽກງານ ຕາມສະເໜີຂອງຜູ້ໃຫ້ທຶນ.
3. ລົງຕິດຕາມ ແລະ ປະເມີນຄວາມເຂົ້າໃຈຂອງຊຸມຊົນ ກ່ຽວກັບການນໍາໃຊ້ເຄື່ອງມືສໍາລັບການປະກອບຄໍາຄິດເຫັນລວມທັງການແກ້ໄຂຂໍ້ຂັດແຍ່ງຕ່າງໆ.
4. ປັບປຸງແຜນທີ່ ຂອງ ທລຍ ໂດຍສະເພາະບັນດາເມືອງ, ກຸ່ມບ້ານ ແລະ ບ້ານ ທີ່ໄດ້ຮັບໂຄງການ ໃນແຕ່ລະຂະແໜງການ ແລະ ແຕ່ລະຮອບວຽນ.
5. ສືບຕໍ່ປັບປຸງຖານຂໍ້ມູນ ເພື່ອໃຫ້ຄວບຄຸມບັນດາຕົວຊີ້ວັດຜົນໄດ້ຮັບຂອງໂຄງການ ເພື່ອໃຫ້ຖານຂໍ້ມູນດັ່ງ ກ່າວໄດ້ຖືກນໍາໃຊ້ຢ່າງມີປະສິດຕິຜົນສູງສຸດ ເຊິ່ງຈະມີການພິຈາລະນາທັງການນໍາໃຊ້ແບບ ONLINE ແລະ ແບບ OFFLONE.

**ວຽກວິສະວະກໍາ:**

1. ສືບຕໍ່ສັງລວມ ແລະ ຕິດຕາມໂຄງການຍ່ອຍ ຮອບວຽນ 12 ແລະ GOL ສົ່ງໃຫ້ຜູ້ໃຫ້ທຶນ (WB) ເພື່ອຂໍ NOL
2. ສືບຕໍ່ສັງລວມໂຄງການຍ່ອຍ 5 ປີ ຜ່ານມາຂອງ ແຂວງຫົວພັນ, ສະຫວັນນະເຂດ, ເຊກອງ ແລະ ແຂວງ ອັດຕະປື.
3. ສືບຕໍ່ຕິດຕາມໂຄງການຍ່ອຍຮອບວຽນທີ່ 11 ແລະ ຫລວດໂຄງການຍ່ອຍຂອງຮອບວຽນທີ່ 12.
4. ສືບຕໍ່ຕິດຕາມການຮ່ວມມືລະຫວ່າງ ທລຍ ແລະ ILO ແລະ ເຂົ້າປະຊຸມຮ່ວມກັບ WSP ເພື່ອສຶກສາຄວາມເປັນໄປໄດ້ໃນການຮ່ວມມື.

**ຈັດຊື້-ຈັດຈ້າງ**

1. ກະກຽມສັນຍາກ່ຽວກັບການວ່າຈ້າງ ຊ່ຽວຊານອອກແບບວີດີໂອ ເພື່ອຖ່າຍທໍາວຽກງານ ທລຍ ຂອງພະແນກພັດທະນາຊຸມຊົນ.
2. ກວດກາງົບປະມານການຈັດຝຶກອົບຮົມວຽກງານບໍລິຫານການເງິນ ແລະ ວຽກງານຈັດຊື້ຈັດຈ້າງ ໃຫ້ກັບທີມງານຈັດຕັ້ງປະຕິບັດຂັ້ນບ້ານ ທລຍ ແລະ ກວດກາງົບປະມານການເປີດຊອງປະມູນໂຄງການຍ່ອຍຮອບວຽນ 12 ຂອງ ທລຍ ແຂວງ ສະຫວັນນະເຂດ.
3. ດັດແກ້ ແລະ ຮ່າງສັນຍາເພື່ອຂໍອະນຸມັດນໍາທະນາຄານໂລກ ກ່ຽວກັບການວ່າຈ້າງບໍລິສັດທີ່ປຶກສາໃຫ້ກັບໂຄງການ LONG (Base Line Survey).
4. ກວດກາງົບປະມານການຝຶກອົບຮົບວຽກງານຈັດຊື້ຈັດຈ້າງ ໃຫ້ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຂອງເມືອງໂພນໄຊ, ປາກແຊງ, ພູຄູນ ແລະ ວຽງຄໍາ ແຂວງຫລວງພະບາງ.
5. ສືບຕໍ່ຕິດຕາມການປະມູນຈັດຊື້-ຈັດຈ້າງ ໂຄງການຍ່ອຍ ບ້ວງທຶນສົມທົບລັດທະບານ ຮອບວຽນ 12.
6. ສືບຕໍ່ປັບປຸງຕາຕະລາງຕິດຕາມຄວາມຄືບໜ້າ ຂອງໂຄງການ ທລຍ.

7. ສືບຕໍ່ດັດແກ້ແຜນຈັດຊື້ຂອງ ທລຍ ສູນກາງ (PRF procurement plan) ແລະ ສືບຕໍ່ຕິດຕາມການຂໍເບີກຈ່າຍໂຄງການຍ່ອຍຮອບວຽນ 9,10, ແລະ 11.
8. ກວດກາເອກະສານຈັດສິ່ງ ແລະ ໃບຮັບເງິນ ປ້າຍໂຄງການຍ່ອຍ ແລະ ເກັບກຳຂໍ້ມູນໂຄງການຍ່ອຍຮອບວຽນ 12.
9. ຄັດເລືອກ ແລະ ເຮັດສັນຍາກັບບໍລິສັດທີ່ປຶກສາດ້ານການກວດສອບບັນຊີໂຄງການ ທລຍ ແລະ ໂຄງການ LONG ປະຈຳປີ 2014.

| ຜູ້ອຳນວຍການບໍລິຫານ ທລຍ | ຫົວໜ້າພະແນກຕິດຕາມປະເມີນຜົນ | ສັງລວມ ແລະ ລາຍງານ |
|---|---|---|
| ------------------------ | ------------------------ | -------------------- |
| ບຸນກວ້າງ ສຸວັນນະພັນ<br>Bounkhouang SOUVANNAPHANH | ທັດທະຈັນ ພິມພັນທະວົງ | ມະນີວັນ ອິນທະປັນຍາ |